# ຢາວັກຊີນຕ້ານ COVID-19 – ຂໍ້ມູນກ່ຽວກັບສຸຂະພາບ ແລະຄວາມປອດໄພໃນການເຮັດວຽກ ສໍາລັບນາຍຈ້າງແລະທຸລະກິດນ້ອຍ

## ການສັກຢາວັກຊີນແລະໜ້າທີ່ຂອງ WHS

ພາຍໃຕ້ຕົວແບບກົດໝາຍກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກທ່ານຕ້ອງຮັບປະກັນຄວາມປອດໄພຂອງບັນດາພະນັກງານຂອງທ່ານ, ຕົວທ່ານເອງແລະຄົນອື່ນໆໃນບ່ອນເຮັດວຽກໃຫ້ຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້ຕາມສົມເຫດສົມຜົນ. ທ່ານອາດຈະບໍ່ສາມາດທີ່ຈະກໍາຈັດຄວາມສ່ຽງຂອງພະນັກງານຕໍ່ການສໍາຜັດກັບ COVID-19 ໄດ້ທັງໝົດຢູ່ບ່ອນເຮັດວຽກ. ຢ່າງໃດກໍ່ດີ, ທ່ານຕ້ອງເຮັດທຸກຢ່າງທີ່ທ່ານສາມາດເຮັດໄດ້ຢ່າງສົມເຫດສົມຜົນເພື່ອຫຼຸດຜ່ອນຄວາມສ່ຽງນີ້.

ເພື່ອຫຼຸດຜ່ອນຄວາມສ່ຽງຢູ່ໃນບ່ອນເຮັດວຽກ, ທ່ານຕ້ອງ:

- ເຮັດການປະເມີນຄວາມສ່ຽງ
- ພິຈາລະນາມາດຕະການຄວບຄຸມແລະເບິ່ງວ່າມາດຕະການນັ້ນຈະຊ່ວຍຄວບຄຸມຄວາມສ່ຽງຕ່າງໆໄດ້ຢ່າງໃດ, ລວມເຖິງການຢູ່ຫ່າງກັນ, ສຸຂະອະນາໄມທີ່ດີແລະທໍາຄວາມສະອາດເປັນປະຈໍາ - ເຊັ່ນດຽວກັບເບິ່ງເລື່ອງການສັກຢາວັກຊີນໃດໆທີ່ມີໃຫ້
- ປຶກສາຫາລືກັບບັນດາພະນັກງານແລະຜູ້ຕາງໜ້າດ້ານສຸຂະພາບແລະຄວາມປອດໄພ (HSRs) ກ່ຽວກັບ COVID-19 ແລະມາດຕະການຄວບຄຸມ, ລວມເຖິງຢາວັກຊີນ
- ຕັດສິນໃຈວ່າມາດຕະການຢ່າງໃດທີ່ສາມາດນໍາໃຊ້ປະຕິບັດໄດ້ຢ່າງສົມເຫດສົມຜົນໃນບ່ອນເຮັດວຽກຂອງທ່ານ

## ຂ້ອຍຕ້ອງລວມເອົາການສັກຢາວັກຊີນແບບບັງຄັບມາເປັນມາດຕະການຄວບຄຸມບໍ ເພື່ອໃຫ້ຖືກກັບເງື່ອນໄຂ ພາລະໜ້າທີ່ກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກ?

ບໍ່ມີແນວໂນ້ມວ່າການບັງໃຫ້ຕ້ອງສັກຢາວັກຊີນຈະຖືກນໍາມາປະຕິບັດໄດ້ຢ່າງສົມເຫດສົມຜົນພາຍໃຕ້ກົດໝາຍກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກ.

ການທີ່ທ່ານຄວນຈະບັງໃຫ້ບັນດາພະນັກງານຂອງທ່ານສັກຢາວັກຊີນຫຼືບໍ່ນັ້ນຂຶ້ນກັບສະພາບການໃນຂະນະທີ່ທ່ານກໍາລັງເຮັດປະເມີນຄວາມສ່ຽງ. ໃຫ້ໄປຂໍຄໍາແນະນໍາຖ້າວ່າທ່ານກໍາລັງພິຈາລະນາວ່າຈະບັງໃຫ້ບັນດາພະນັກງານຂອງທ່ານສັກຢາວັກຊີນແລະໃຫ້ຄິດເຖິງຄວາມສໍາພັນໃນບ່ອນເຮັດວຽກ, ການແບກແຍກ ແລະ ບັນຫາເລື່ອງຄວາມເປັນສ່ວນຕົວ.

ອາດມີ ຄໍາສັ່ງດ້ານສຸຂະພາບຕໍ່ສາທາລະນະຊົນ ທີ່ບັງໃຫ້ມີການສັກຢາວັກຊີນສໍາລັບບາງອຸດສາຫະກໍາຫຼືບັນດາພະນັກງານ. ໃຫ້ຮູ້ທັນກັບຄໍາແນະນໍາຂອງພະແນກສາທາລະນະສຸກຂອງທ່ານ.

### ຂ້ອຍສາມາດບັງໃຫ້ລູກຄ້າພິສູດວ່າເຂົາເຈົ້າໄດ້ສັກຢາວັກຊີນແລ້ວກ່ອນເຂົ້າມາໃນບ່ອນເຮັດວຽກຂອງຂ້ອຍບໍ?

ບໍ່ມີແນວໂນ້ມວ່າກົດໝາຍດ້ານສຸຂະພາບແລະຄວາມປອດໄພໃນການເຮັດວຽກຈະບັງໃຫ້ລູກຄ້າຫຼືຜູ້ມາຢ້ຽມຢາມຕ້ອງສະແດງຫຼັກຖານການສັກຢາວັກຊີນ. ກ່ອນທີ່ທ່ານຈະນຳເອົາມາດຕະການອັນນີ້ມານຳໃຊ້, ໃຫ້ໄປຂໍຄຳແນະກ່ອນເພາະວ່າມັນອາດມີບັນຫາເລື່ອງຄວາມເປັນສ່ວນຕົວແລະການແບ່ງແຍກ.

### ບັນດາພະນັກງານຂອງຂ້ອຍສາມາດປະຕິເສດບໍ່ເຮັດວຽກຍ້ອນພະນັກງານຄົນອື່ນບໍ່ໄດ້ສັກຢາວັກຊີນບໍ?

ພາຍໃຕ້ກົດໝາຍ WHS, ພະນັກງານຜູ້ໜຶ່ງສາມາດຢຸດຫຼືປະຕິເສດທີ່ຈະສືບຕໍ່ເຮັດວຽກຖ້າເຂົາເຈົ້າມີຄວາມກັງວົນທີ່ສົມເຫດສົມຜົນວ່າມີຄວາມສ່ຽງຢ່າງຮ້າຍແຮງຕໍ່ສຸຂະພາບແລະຄວາມປອດໄພຈາກການສຳຜັດຕໍ່ອັນຕະລາຍທີ່ເຫັນໄດ້ວ່າຈະເກີດທັນທີແລະຈວນຕົວ.

ໃນກໍລະນີສ່ວນໃຫຍ່, ພະນັກງານຜູ້ໜຶ່ງຈະບໍ່ສາມາດອີງໃສ່ກົດໝາຍກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກວ່າຕົນຢຸດເຮັດວຽກຍ້ອນພຽງແຕ່ວ່າພະນັກງານອີກຄົນໜຶ່ງບໍ່ໄດ້ສັກຢາວັກຊີນ.

### ຂ້ອຍຈະມີຄວາມຜິດພາຍໃຕ້ກົດໝາຍກ່ຽວກັບສຸຂະພາບແລະຄວາມປອດໄພໃນການເຮັດວຽກບໍຖ້າຂ້ອຍບໍ່ບັງຄັບໃຫ້ພະນັກງານຂອງຂ້ອຍສັກຢາວັກຊີນແລະໜຶ່ງໃນບັນດາພະນັກງານເກີດຕິດເຊື້ອ COVID-19 ຂຶ້ນມາ?

ບໍ່ມີແນວໂນ້ມວ່າທ່ານໄດ້ເຮັດຜິດກົດໝາຍຕົວແບບສຸຂະພາບແລະຄວາມປອດໄພໃນການເຮັດວຽກຍ້ອນພຽງແຕ່ວ່າທ່ານບໍ່ໄດ້ບັງໃຫ້ບັນດາພະນັກງານຕ້ອງສັກຢາວັກຊີນ.

ທ່ານຕ້ອງສືບຕໍ່ນຳໃຊ້ປະຕິບັດມາດຕະການທີ່ນຳມາໃຊ້ໄດ້ຢ່າງສົມເຫດສົມຜົນຢູ່ໃນບ່ອນເຮັດວຽກຂອງທ່ານ, ເຊັ່ນປະຕິບັດການຢູ່ຫ່າງກັນ, ມີສຸຂະອະນາໄມທີ່ດີ ແລະ ທຳຄວາມສະອາດເປັນປະຈຳແລະຮັກສາສະພາບການດັ່ງກ່າວ, ເຖິງແມ່ນວ່າບັນດາພະນັກງານຈະໄດ້ສັກຢາວັກຊີນແລ້ວກໍຕາມ.

## ຂໍ້ມູນເພີ່ມເຕີມ

- ຂໍ້ມູນກ່ຽວກັບສຸຂະພາບແລະການສັກຢາວັກຊີນ – ກະຊວງສາທາລະນະສຸກ
- ສຸຂະພາບແລະຄວາມປອດໄພໃນບ່ອນເຮັດວຽກ - ໂຄງການເຮັດວຽກຢ່າງປອດໄພແຫ່ງປະເທດອອສເຕຣເລັຍ
- ສິດທິໃນບ່ອນເຮັດວຽກ – ຜູ້ຄຸ້ມຄອງດ້ານການເຮັດວຽກທີ່ຍຸຕິທຳ